**ພິທີເຊັນສັນຍາ ວ່າດ້ວຍ ການໃຫ້ບໍລິການ ທີ່ປຶກສາທາງດ້ານການເງິນ**
**ລະຫວ່າງ**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ**




ໃນຕອນເຊົ້າຂອງວັນທີ 24 ກຸມພາ 2017 ທີ່ຜ່ານມາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ (ບລຈ) ໄດ້ຈັດພິທີລົງນາມ ວ່າດ້ວຍ ການໃຫ້ບໍລິການທີ່ປຶກສາທາງດ້ານການເງິນ ທີ່ສຳນັກງານໃຫຍ່ ທຄຕລ.

ພິທີລົງນາມໃນຄັ້ງນີ້ ແມ່ນລົງນາມໂດຍ:

- ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ແລະ

- ທ່ານ ລິນ ລີ, ຜູ້ອຳນວຍການ, ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ.

ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຄັ້ງນີ້ ປະກອບມີ:

1. ທ່ານ ຄຳສຸກ ສູນດາລາ, ຮອງປະທານສະພາບໍລິຫານ ທຄຕລ
2. ທ່ານ ວັນຄຳ ວໍຣະວົງ , ຜູ້ອຳນວຍການໃຫຍ່ ຕະຫລາດຫຼັກຊັບລາວ
3. ທ່ານ ສອນເພັດ ອິນທະວົງ, ຮອງຫົວໜ້າກົມຄຸ້ມຄອງລັດວິສາຫະກິດ ການລົງທຶນລັດ ແລະ ປະກັນໄພ, ກະຊວງການເງິນ
4. ທ່ານ ນາງ ນະຄອນສີ ມະໂນທັມ ຮອງຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ
5. ທ່ານ ນາງ ໂພທິຈັນ ທຳມະເທວາ, ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ

ພ້ອມດ້ວຍ, ຕາງໜ້າບໍລິສັດກວດສອບບັນຊີ E&Y ແລະ ບັນດາບໍລິສັດທີ່ປຶກສາກົດໝາຍໃນ ສ.ປ.ປ ລາວ, ຄະນະອຳນວຍການ, ຄະນະພະແນກ, ຄະນະສູນ ແລະ ຄະນະສາຂາຂອງ ທຄຕລ ແລະ ທີມງານຊ່ຽວຊານຂອງ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ.

ສັນຍາ ວ່າດ້ວຍການໃຫ້ບໍລິການ ທີ່ປຶກສາທາງດ້ານການເງິນ ທີ່ລົງນາມກັນ ລະຫວ່າງ ທຄຕລ ແລະ ບລຈ ແມ່ນໄດ້ກໍານົດບັນດາໜ້າວຽກ ແລະ ຄາດໝາຍຈໍາເປັນຕ່າງໆ ເພື່ອດໍາເນີນການກະກຽມຄວາມພ້ອມ ແລະ ໃຫ້ຄໍາແນະນໍາແກ່ ທຄຕລ ເພື່ອໃຫ້ສາມາດສໍາເລັດການເພີ່ມທຶນ ທີ່ມີມູນຄ່າລວມ 360 ຕື້ກີບ ເຊິ່ງແຜນການເພີ່ມທຶນດັ່ງກ່າວແມ່ນໄດ້ຖືກຮັບຮອງ ມາຕັ້ງແຕ່ກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2013.

ຕະຫລອດໄລຍະເວລາທີ່ຜ່ານມາ, ທຄຕລ ໄດ້ດໍາເນີນການ ຄົ້ນຄ້ວາກະກຽມຄວາມພ້ອມດ້ານວິຊາການ, ບຸກຄະລາກອນ ແລະ ປະສານງານກັບຂັ້ນເທິງທີ່ກ່ຽວຂ້ອງ ກ່ຽວກັບການເພີ່ມທຶນດັ່ງກ່າວ. ພາຍຫຼັງສໍາເລັດການເພີ່ມທຶນ, ທຄຕລ ຈະສາມາດບັນລຸອັດຕາ ຄວາມພຽງພໍ ຂອງທຶນຕາມລະບຽບທີ່ ທະນາຄານແຫ່ງ ສ.ປ.ປ ລາວ ໄດ້ກໍານົດໄວ້, ເປັນພື້ນຖານສໍາຄັນສໍາລັບການນໍາໃຊ້ຫຼັກການ BASEL II (ບາເຊວ 2) ໃນອະນາຄົດ ພ້ອມທັງຈະເສີມສ້າງຄວາມເຂັ້ມແຂງທາງດ້ານທຶນ ເພື່ອຍົກສູງຄວາມສາມາດ ດ້ານການແຂ່ງຂັນ, ຮອງຮັບການຂະຫຍາຍຕົວຂອງທຸລະກິດ, ອອກຜະລິດຕະພັນໃໝ່, ພັດທະນາການບໍລິການຂອງ ທຄຕລ ໃຫ້ມີຄວາມທັນສະໄໝ ແລະ ໄດ້ມາດຕະຖານສາກົນ. ເຊິ່ງ ທຄຕລ ໄດ້ສ້າງແຜນຍຸດທະສາດໄລຍະ 5 ປີ ແລະ ແຜນທຸລະກິດແຕ່ລະປີເປັນອັນລະອຽດ ໄດ້ຕັ້ງເປົ້າໝາຍຂະຫຍາຍສິນເຊື່ອໃນລະດັບສະເລ່ຍ 12% ຕໍ່ປີ ຕາມພາວະເສດຖະກິດຢູ່ໃນໄລຍະຂະຫຍາຍຕົວ ໂດຍເນັ້ນການກະຈາຍສິນເຊື່ອໄປຫຼາຍຂະແໜງການ ແລະ ຫຼາຍຂະໜາດລູກຄ້າ. ນອກນັ້ນ, ທຄຕລ ຈະເນັ້ນສະໜອງການບໍລິການແບບທັນສະໄໝ (ໝູນໃຊ້ລະບົບ IT) ແລະ ອອກຜະລິດຕະພັນໃໝ່ ເພື່ອດຶງດູດລູກຄ້າມາໃຊ້ບໍລິການຫຼາຍຂຶ້ນ, ຄວບຄຸມຄຸນນະພາບສິນເຊື່ອໃຫ້ຢູ່ໃນລະດັບດີ ແລະ ສ້າງກໍາໄລເພີ່ມຂຶ້ນໃນແຕ່ລະປີ.

ສໍາລັບລາຄາສະເໜີຂາຍ,ຈໍານວນຮຸ້ນ RO & PO ແລະ ຂໍ້ມູນກ່ຽວຂ້ອງອື່ນໆ ແມ່ນຈະແຈ້ງໃຫ້ນັກລົງທຶນຮັບຮູ້ຕາມພາຍຫຼັງອີກເທື່ອໜຶ່ງ ພາຍຫຼັງທີ່ ທີ່ປຶກສາທາງດ້ານການເງິນໄດ້ດໍາເນີນການສຶກສາຄົ້ນຄ້ວາຢ່າງລະອຽດແລ້ວ.